ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ

ສາມາດດາວໂຫຼດຜ່ານ
QR Code ນີ້


ການບຸກເບີກ
ການພັດທະນາ
ການປົກປັກຮັກສາ ແລະ ນຳໃຊ້
ເຈົ້ານຳໃຊ້ທີ່ດິນຕອນນີ້ມາດົນແລ້ວບໍ?
ຂ້ອຍນຳໃຊ້ດິນຕອນນີ້ມາ20 ກວ່າປີແລ້ວ
ມີເອກະສານຫຍັງຢັ້ງຢືນບໍ?
ບໍ່ມີເອກະສານ ແຕ່ນາຍບ້ານຢັ້ງຢືນໄດ້
ຂ້ອຍຜູ້ນຳໃຊ້ທີ່ດິນຂ້າງຄຽງ ສາມາດຢັ້ງຢືນໄດ້

ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019

ມາດຕາ 130 (ໃໝ່) ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ

ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນ ການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ຢ່າງເປັນປົກກະຕິ ເປັນເວລາຫຼາຍກວ່າ ຊາວປີ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ໂດຍບໍ່ມີເອກະສານໃດຢັ້ງຢືນການໄດ້ມາທີ່ດິນນັ້ນ ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບການເຂົ້າຄອບຄອງ ແລະ ນຳໃຊ້ທີ່ດິນນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍໄດ້ຮັບການແກ້ໄຂແລ້ວ.

ໃນໄລຍະທີ່ຍັງບໍ່ທັນໄດ້ຂຶ້ນທະບຽນອອກໃບຕາດິນໃຫ້ບຸກຄົນເທື່ອນັ້ນ ລັດ ຮັບຮູ້ ແລະ ປົກປ້ອງສິດນຳໃຊ້ທີ່ດິນຕາມປະເພນີຂອງຜູ້ກ່ຽວ ແລະ ດຳເນີນການຂຶ້ນທະບຽນອອກໃບຕາດິນໃຫ້ຕາມກົດໝາຍ.

Brot für die Welt
ສະຫະພາບ ເອີຣົບ
European Union
NAFRI
LIWG
JVC
LIFE
CCL
WWF
Cord